ເລື່ອງຈິງທີ່ໜ້າປະທັບໃຈ ກ່ຽວກັບ

# ລຸງໄກສອນ ພົມວິຫານ
# ແລະ ຜູ້ນຳ ບາງທ່ານ

ຊຶ່ງເປັນສ່ວນສຸດທີ່ປະເສີດໃນມວນມໍລະດົກແຫ່ງຄວາມຊົງຈຳ
ບົນເສັ້ນທາງແຫ່ງຊີວິດອັນລະອົດລະອ່ຽວຂອງຂ້າພະເຈົ້າ ແລະ ຄອບຄົວ.




ລຸງໃຫຍ່ ໄກສອນພົມວິຫານນີ້ ຊຸນບູລົມຍຸກໃໝ່ ເຮົາແລ້ວ
ເຮັດໃຫ້ ສ.ປ.ປ.ລາວໄດ້ເກີດຂຶ້ນ ຂະຫຍາຍພື້ນພັດທະນາ

ບອກວ່າ ໝົດປະຊາຊາດເຊື້ອ ຈະຈຳຈື່ຈາລຶກ
ນຶກຮ່ຳເຫັນບຸນຄຸນ
ພ້ອມຂໍ້ຄວາມຄຳສອນ ຕະຫຼອດໄປເມືອໜ້າ
ຂໍໃຫ້ ລຸງຜູ້ນຳພາສ້າງ ວາງປົງສິລາເລີກ ມານີ້
ແນວທາງບຸກເບີກໄວ້ ໄດ້ເມືອຟ້າສູ່ສະຫວັນ ພຸ້ນເຖີ້ນ.

ພູນ ຄຳມຸນເຮືອງ

ເລື່ອງຈິງທີ່ໜ້າປະທັບໃຈ ກ່ຽວກັບ

# ລູງໄກສອນ ພົມວິຫານ
# ແລະ ຜູ້ນຳ ບາງທ່ານ

ຊຶ່ງເປັນສ່ວນສຸດທີ່ປະເສີດໃນມວນມໍລະດົກແຫ່ງຄວາມຊົງຈຳ
ບົນເສັ້ນທາງແຫ່ງຊີວິດອັນລະອິດລະອ່ຽວຂອງຂ້າພະເຈົ້າ ແລະ ຄອບຄົວ.

| | | | |
|---|---|---|---|
| ລູງໃຫຍ່ | ໄກສອນພົມວິຫານນີ້ | ຂຸນບູລົມຍຸກໃໝ່ | ເຮົາແລ້ວ |
| ເຮັດໃຫ້ | ສ.ປ.ປ.ລາວໄດ້ເກີດຂຶ້ນ | ຂະຫຍາຍພົ້ນພັດທະນາ | |
| | | | |
| ບອກວ່າ | ໝົດປະຊາຊາດເຊື້ອ | ຈະຈຳຈື່ຈາລຶກ | |
| | ນຶກຮ່ຳເຫັນບຸນຄຸນ | | |
| | ພ້ອມຂໍ້ຄວາມຄຳສອນ | ຕະຫຼອດໄປເມືອໜ້າ | |
| ຂໍໃຫ້ | ລູງຜູ້ນຳພາສ້າງ | ວາງປົງສີລາເລີກ | ມານີ້ |
| | ແນວທາງບຸກເບີກໄວ້ | ໄດ້ເມືອຟ້າສູ່ສະຫວັນ | ພຸ້ນເຖີ້ນ. |

ພູນ ຄຳມຸນເຮືອງ

# ສາລະບານ

ໜ້າ


- ຄຳນຳ 3
- ຄວາມເຫັນຈາກຜູ້ແຕ່ງ 5

**I : ເລື່ອງກ່ຽວກັບລູງໄກສອນ ພົມວິຫານ 7**

- ຄັ້ງທຳອິດທີ່ຂ້າພະເຈົ້າໄດ້ພົບພໍ້ລູງໄກສອນ ໜ້າເຊິ່ງໜ້າ 8
- ລູງໄກສອນຄືງຈະມີສ່ວນເຮັດໃຫ້ຄອບຄົວຂອງຂ້າພະເຈົ້າ ພ້ອມລູກນ້ອຍສອງຄົນຖືກຍົກຍ້າຍມາຢູ່ຮ່ວມກັນ ຢູ່ກອງ ກໍ່ສ້າງທາງເລກ 6 12
- ຈອກເຫຼົ້າພ້ອມຄຳອ່ວຍພອນຂອງລູງໄກສອນ ທີ່ຂ້າພະເຈົ້າ ຈະບໍ່ມີວັນລືມໄດ້ 15
- ຄຳກ່າວເຕືອນຂອງລູງໄກສອນທີ່ວ່າ ໃຫ້ຂ້າພະເຈົ້າຫລຸດຜ່ອນ ການດື່ມເຫຼົ້ານັ້ນແມ່ນສຸດທີ່ຖືກຕ້ອງ 21
- ແມ່ນໂຊກໂດຍບັງເອີນທີ່ຂ້າພະເຈົ້າໄດ້ພົບລູງໄກສອນ ຢູ່ເຮືອນ ຕາແສງວັງ ທີ່ບ້ານເມືອງປົວໃນລະຫວ່າງທ້າຍປີ 1975 28
- ສິ່ງທີ່ໜ້າເຫລືອເຊື່ອແມ່ນລູງໄກສອນ ເປັນຜູ້ເປົ່າແຄນໃຫ້ຂ້າພະເຈົ້າ ລຳຄອນສະຫວັນ 33
- " ເຫດການທີ່ຈະບໍ່ມີວັນລືມ " ພ້ອມບົດກະວີ " ຢາດນ້ຳຕາປະຕິຍານ " 36
- ຂ້າພະເຈົ້າສຸດທີ່ຮູ້ສຶກປະທັບໃຈອີກ ທີ່ແມ່ນລູງໄກສອນເອງເປັນຜູ້ເຊັນ ຂໍ້ຕົກລົງຫຼັງຈາກທີ່ຕົນໄດ້ເຮັດຈົດໝາຍຂໍຄວາມເປັນທຳຕື່ມ 48
- ຄວາມໄວ້ເນື້ອເຊື່ອໃຈຈາກລູງໄກສອນ ທີ່ຂ້າພະເຈົ້າຈາລຶກໄວ້ ຢ່າງພາກພູມໃຈ 53
- ເລື່ອງຈິງຕອນທີ່ພາລູງໄກສອນໄປເລາະຊື້ເຄື່ອງຢູ່ " LA DÉFENCE " ແລ້ວໄປກິນອາຫານທ່ຽງຢູ່ນອກກຸງ PARIS 62

- ສິ່ງທີ່ບໍ່ຄາດຄິດໄດ້ເກີດຂຶ້ນໃນໂອກາດການພົບປະຂອງລູງໄກສອນ ກັບ ຊາວລາວອົບພະຍົບຢູ່ຝຣັ່ງເສດ ທີ່ສະຖານທູດລາວຢູ່ກຸງ PARIS 74
- ໂອກາດສັ່ງລາ ລູງໄກສອນກັບຄືນປະເທດ 86
- ເວລາຂ້າພະເຈົ້າເຂົ້າໄປຢ້ຽມຢາມ ລູງໄກສອນ ທີ່ກຳລັງປ່ວຍຢູ່ຫ້ອງ 6 90
- ສຸດທ້າຍຄວາມໂສກເສົ້າສະຫຼົດໃຈອັນໃຫຍ່ຫຼວງກໍ່ເກີດຂຶ້ນແກ່ປະຊາຊົນລາວ - ບົດກະວີ " ຂໍຈາລຶກບຸນຄຸນຂອງລູງໄກສອນ " 93

## II : ເລື່ອງກ່ຽວກັບລູງສີສົມພອນ ລໍວັນໄຊ 96

- ເລື່ອງທີໜຶ່ງ : ຂ້າພະເຈົ້າຮູ້ສຶກຊາບຊຶ້ງໃນໃຈທີ່ລູງສີສົມພອນ ໃຫ້ໄປພົບເພິ່ນຢູ່ທີ່ຫ້ອງ 6 97
- ເລື່ອງທີສອງ : ຂໍຈາລຶກຄຸນງາມຄວາມດີຂອງລູງສີສົມພອນ ລໍວັນໄຊ 98

## III : ເລື່ອງກ່ຽວກັບລູງພູນ ສີປະເສີດ 102

( ຍ້ອນຂ້າພະເຈົ້າມີຊື່ຄືເພິ່ນ ແລ້ວຍາມໃດທີ່ບໍ່ໄດ້ບອກນາມສະກຸນໄປພ້ອມ ກໍ່ແມ່ນມັກພາໃຫ້ຫຼົງເຂົ້າໃຈຜິດດັ່ງໃນບັນດາເລື່ອງຕໍ່ໄປນີ້... )

- ເລື່ອງທີໜຶ່ງ : ເກີດຂຶ້ນໃນປີ 1974 ຢູ່ເຂດປົດປ່ອຍເກົ່າທີ່ຊຳເໜືອ 103
- ເລື່ອງທີສອງ : ກ່ຽວກັບສົ້ມໄຂ່ປາທີ່ແມ່ຝາກມາໃຫ້ແຕ່ບ້ານ 104
- ເລື່ອງທີສາມ : ສະຖານທູດລາວທີ່ໂໝສກູເຂົ້າໃຈຜິດ 106
- ເລື່ອງທີສີ່ : ພາເຂົ້າສາມັກຄີໃນວັນປີໃໝ່ລາວ ( 1989 ) 109
- ເລື່ອງທີຫ້າ : ຄຳສັ່ງລູງໄກສອນຖືກເຂົ້າໃຈຜິດ 111

## ຄຳນຳ

ຜ່ານມາໄດ້ມີການຂີດຂຽນກ່ຽວກັບ ລູງໄກສອນ ພົມວິຫານຢ່າງຫຼວງຫຼາຍແທ້ ແຕ່ສ່ວນມາກແລ້ວແມ່ນເວົ້າ ແລະ ວິໄຈ ເຖິງບັນດາບັນຫາດ້ານການເມືອງ ໂດຍອີງຕາມຖານະຕຳແໜ່ງຜູ້ນຳຂັ້ນສູງສຸດຂອງເພິ່ນນັ້ນ. ສ່ວນປຶ້ມທີ່ທ່ານ ພູນ ຄຳມຸນເຮືອງ ຂຽນອອກມານີ້ພັດແມ່ນໄປໃນອີກລັກສະນະໜຶ່ງ. ຂ້າພະເຈົ້າຮູ້ສຶກຊົມຊື່ນ ແລະ ປື້ມໃຈນຳບໍ່ໜ້ອຍ ເມື່ອໄດ້ອ່ານບັນດາເລື່ອງຈິງຂຽນເລົ່າອອກໃນປຶ້ມດັ່ງກ່າວ ທີ່ຊີ້ບອກເຖິງບຸກຄະລິກລັກສະນະ ຫຼື ນິໄສໃຈຄໍອັນດີເດັ່ນຂອງລູງໄກສອນ ໂດຍສະເພາະແລ້ວຕໍ່ຂັ້ນລຸ່ມນັ້ນ.

ຍ້ອນວ່າໃນຫຼາຍປີກ່ອນນີ້ ໄດ້ເປັນຜູ້ໜຶ່ງທີ່ເຄີຍຮັບໃຊ້ເພິ່ນຢ່າງໃກ້ຊິດ ຂ້າພະເຈົ້ານອກຈາກສຸດທີ່ເຫັນດີເຫັນພ້ອມນຳຜູ້ແຕ່ງແລ້ວ ກໍ່ຂໍຍົກຈຸດເດັ່ນໜຶ່ງອີກໃນນິໄສອັນຈົບງາມຂອງເພິ່ນໃຫ້ທ່ານຜູ້ອ່ານຮູ້ຕື່ມ. ຄືວ່າຍາມເພິ່ນເກີດໃຈຮ້າຍຍ້ອນຂັ້ນລຸ່ມມີຄວາມຜິດທີ່ບໍ່ສົມຄວນໃດໜຶ່ງນັ້ນເພິ່ນກໍ່ຮ້າຍຂຶ້ນໂດຍກົງໂລດໂດຍຈຳແນກຄວາມຜິດຢ່າງຈະແຈ້ງ ຊີ້ໃຫ້ເຫັນສາຍເຫດ ແລະ ຜົນສະທ້ອນຂອງມັນ ແລ້ວໃຫ້ຄຳຕັກເຕືອນສັ່ງສອນໄປພ້ອມ. ແຕ່ບໍ່ມີຈັກເທື່ອທີ່ເພິ່ນຈະຫາເລື່ອງມາຕື່ມໃສ່. ທຸກເທື່ອເພິ່ນຮ້າຍແລ້ວກໍ່ແລ້ວໄປໂດຍບໍ່ມີອັກຄະຕິໃດໆ ພ້ອມຍັງສືບຕໍ່ໃຫ້ຄວາມຮັກແພງ ແລະ ອົບຮົມກໍ່ສ້າງພະນັກງານຜູ້ນັ້ນຕໍ່ໄປ. ອັນນີ້ເວົ້າໄດ້ວ່າຜູ້ຖືກຮ້າຍນັ້ນແມ່ນໄດ້ຮັບທັງບົດຮຽນ ແລະ ຄວາມອົບອຸ່ນໄປພ້ອມທັງມີຄວາມຕັດສິນໃຈບຸກບືນກໍ່ ສ້າງຕົນເອງໃຫ້ກ້າວໜ້າຂຶ້ນເລື້ອຍໆ.

ສິ່ງທີ່ໜ້າຊົມເຊີຍສັນລະເສີນອີກກໍ່ແມ່ນວ່າ ທ່ານພູນ ຄຳມຸນເຮືອງ ປັນຍາຊົນຜູ້ຮັກຊາດທີ່ແຕ່ງປຶ້ມອອກມານີ້ແມ່ນມີຄວາມຊົງຈຳອັນລະອຽດລະອໍດີເປັນພິເສດ. ເຖິງວ່າບັນດາເຫດການເລົ່ານັ້ນໄດ້ເກີດຂຶ້ນດົນນານມາແລ້ວແຕ່ເພິ່ນຍັງຈື່ຈຳ ແລະ ຂຽນເລົ່າອອກຢ່າງມີຊີວິດຊີວາສົມຄວນ.

ແນ່ນອນອັນນີ້ຈະເປັນການຊ່ວຍສົມທົບເຮັດໃຫ້ລັດສະໝີແຫ່ງບຸກຄະລິກລັກສະນະອັນລ້ຳເລີດດັ່ງກ່າວຂອງລູງ ໄກສອນ ພົມວິຫານ ໄດ້ຍືນຍົງໃນຄວາມຊົງຈຳຈາລຶກໄວ້ຂອງມວນຊົນຊາວລາວເຮົາຕະຫຼອດໄປ.



**ສົມສະຫວາດ ເລັ່ງສະຫວັດ**

ກຳມະການກົມການເມືອງສູນກາງພັກ.
ຮອງນາຍົກລັດຖະມົນຕີ ຜູ້ປະຈຳການລັດຖະບານ
ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## ຄວາມເຫັນຈາກຜູ້ແຕ່ງ

ໃນແຕ່ລະເລື່ອງກ່ຽວກັບລູງໄກສອນ ພົມວິຫານ ທີ່ຂ້າພະເຈົ້າຂຽນອອກໃນປຶ້ມຫົວນີ້ບໍ່ມີການເວົ້າເຖິງທັດສະນະແນວຄິດຂອງເພິ່ນໃນບັນຫາດ້ານການເມືອງ ດ້ານປັດຊະຍາ ຫຼື ດ້ານແນວທາງນະໂຍບາຍຂອງພັກດັ່ງທີ່ເຫັນໃນບັນດາປຶ້ມ ແລະ ເອກະສານຕ່າງໆຂຽນອອກກ່ຽວກັບເພິ່ນ ມາເຖິງນີ້ບໍ່ວ່າໂດຍຝ່າຍລາວ ເຮົາກໍ່ຄືໂດຍຊາວຕ່າງປະເທດ. ເພາະວ່ານັ້ນບໍ່ແມ່ນຈຸດປະສົງ ແລະ ຄົງຈະບໍ່ແມ່ນເລື່ອງງ່າຍອີກສຳລັບຕົນເອງ. ໃນນີ້ຈຸດປະສົງຂອງຂ້າພະເຈົ້າ ແມ່ນພຽງແຕ່ຢາກຍົກຈຸດເດັ່ນດ້ານໜຶ່ງອີກໃນຕົວຂອງລູງໄກສອນ ທີ່ເຮັດໃຫ້ຕົນນີ້ເກີດຄວາມປະທັບໃຈນຳນັ້ນມາເລົ່າສູ່ທ່ານຜູ້ອ່ານທັງຫຼາຍຟັງ.

ເວົ້າແທ້ຂ້າພະເຈົ້າແມ່ນຄິດຢາກຂຽນເລົ່າອອກມານານແລ້ວ ອັນມີທັງເລື່ອງແຕ່ຄາວໄດ້ພົບພໍ້ເພິ່ນຢູ່ເຂດປົດປ່ອຍເກົ່າພຸ້ນ ແລະ ຫຼາຍເລື່ອງຕໍ່ໆມາອີກເວລາທີ່ໄດ້ຮັບໃຊ້ເພິ່ນ. ແຕ່ຄວາມຮັບຜິດຊອບໃນໜ້າທີ່ວຽກງານຕ່າງໆນັ້ນເຮັດໃຫ້ບໍ່ສາມາດມີໂອກາດອັນເໝາະສົມທີ່ອຳນວຍຄວາມສະດວກໃຫ້ຂຽນອອກສຳເລັດໄດ້ຈຶ່ງໄດ້ປະຄ້າງໄວ້. ຈົນມາເຖິງໄລຍະອອກບຳນານພີ້ຂ້າພະເຈົ້າຈຶ່ງໄດ້ມີເວລາຮື້ຟື້ນຄວາມຊົງຈຳ ແລະ ຂີດຂຽນອອກມາ. ນັ້ນແມ່ນເລື່ອງກ່ຽວເຖິງນິໄສໃຈຄໍແບບພິເສດຂອງເພິ່ນໂດຍສະເພາະຕໍ່ຂັ້ນລຸ່ມຊຶ່ງເປັນໄປແບບທຳມະດາ ທຳມະດາ ບໍ່ມີວາງທ່າຖືຕົວຫຍັງໝົດ. ໃນວາດເວົ້າວາຈາເວລາເພິ່ນຊັກຖາມ ຫຼື ຕັກເຕືອນກໍ່ແມ່ນແບບຈິງໃຈກົງໄປກົງມາລັກສະນະກັນເອງ ແລະ ຍາມອາລົມເພິ່ນດີກໍ່ເວົ້ານົວຫົວມ່ວນ ຫຼື ຢອກເຢີ້ຍຢ່າງສະໜິດສະໜົມໄປນຳອີກ. ອັນນີ້ເວົ້າແທ້ແມ່ນເລື່ອງທີ່ບໍ່ເປັນໄປໄດ້ງ່າຍສຳລັບຜູ້ນຳຂັ້ນສູງແລ້ວ. ແຕ່ສຳລັບລູງໃຫຍ່ເຮົານີ້ແມ່ນພິເສດທີ່ສຸດ. ຜູ້ທີ່ເຄີຍຮັບໃຊ້ ແລະ ໃກ້ຊິດກັບເພິ່ນໃຜໆກໍ່ເວົ້າເຖິງເລື່ອງດັ່ງກ່າວຢ່າງຊົມຊື່ນ

ປະທັບໃຈ.

ສ່ວນຂ້າພະເຈົ້ານີ້ ທີ່ບິນເສັ້ນທາງແຫ່ງຊີວິດຂອງຕົນໄດ້ມີໂອກາດພົບປະກັບເພິ່ນ ແລະ ພົວພັນຮັບໃຊ້ເພິ່ນເປັນບາງຄັ້ງບາງຄາວນັ້ນ ກໍ່ຂໍຢັ້ງຢືນເຖິງນິໄສໃຈຄໍອັນໃສແຈ້ງຈິບງາມດັ່ງກ່າວຂອງເພິ່ນດ້ວຍການຂີດຂຽນວາດພາບເລົ່າເຖິງເຫດການເຫຼົ່ານັ້ນໄວ້ໃນປຶ້ມຫົວນີ້. ພ້ອມກັນກໍ່ໄດ້ຂຽນກ່ຽວກັບຜູ້ນຳບາງທ່ານຕື່ມໃສ່ໃນຕອນທ້າຍອີກ.

ຫວັງວ່າທ່ານຜູ້ອ່ານຈະເກີດຄວາມຮູ້ສຶກປະທັບໃຈເຊັ່ນດຽວກັນ.

**ພູນ ຄຳມຸນເຮືອງ**

# ເລື່ອງກ່ຽວກັບ
# ລຸງໄກສອນ ພິມວິຫານ

24/VII
ຫ້າມຈຳໜ່າຍ

## ຄັ້ງທຳອິດທີ່ຂ້າພະເຈົ້າໄດ້ພົບພໍ້
## ລຸງໄກສອນ ພົມວິຫານ ໜ້າເຊິ່ງໜ້າ

ເໝືອນດັ່ງມວນຊົນທົ່ວໄປ ຂ້າພະເຈົ້າກໍ່ແມ່ນໄດ້ຮູ້ຊື່ສຽງ, ເຫັນຮູບພາບ ແລະ ຊາບເຖິງປະຫວັດຂອງລຸງໄກສອນ ພົມວິຫານມາກ່ອນແດ່ແລ້ວ ໂດຍຜ່ານການເລົ່າລື ຜ່ານໜັງສືພິມ ຫຼື ບົດຂຽນຕ່າງໆກ່ຽວກັບເພິ່ນ.

ເມື່ອຕົນເອງ ພາຍຫລັງທີ່ໄດ້ຮ່ວມໃນຂະບວນການຕໍ່ສູ້ຂອງນັກສຶກສາທີ່ກ້າວໜ້າຢູ່ຝຣັ່ງເສດຢ່າງຕັ້ງໜ້າ ໂດຍສັງກັດຢູ່ໃນຄະນະ " **ສຳພັນນັກສຶກສາລາວນະປະເທດຝຣັ່ງເສດ** " ແລະ ເປັນສະມາຊິກຂອງໜ່ວຍ " **ຊາວໜຸ່ມແນວລາວຮັກຊາດ** " ແບບປິດລັບຢູ່ທີ່ນັ້ນ ໄລຍະໜຶ່ງແລ້ວໄດ້ຕັດສິນໃຈກັບຄືນສູ່ປະເທດພ້ອມກັບຄອບຄົວ ແລະ ລູກນ້ອຍ 2 ຄົນ ໂດຍໄປຢູ່ເຂດປົດປ່ອຍທີ່ຊຳເໜືອ ເພື່ອຮ່ວມໃນຂະບວນການປະຕິວັດໃນຕົວຈິງນັ້ນແລ້ວກໍ່ຍິ່ງສຳນຶກເຖິງເພິ່ນດ້ວຍຄວາມທະນົງໃຈ, ຄວາມເຊື່ອໝັ້ນຢ່າງໜັກແໜ້ນ ແລະ ຄວາມເຄົາລົບນັບຖືຢ່າງສູງແທ້.

ຄັ້ງທຳອິດທີ່ຂ້າພະເຈົ້າໄດ້ພົບເພິ່ນໃນຕົວຈິງຢ່າງໃກ້ຊິດ ກໍ່ແມ່ນຢູ່ເຂດປົດປ່ອຍເກົ່າພຸ້ນ ເວລາທີ່ຕົນເອງນີ້ຮັບໜ້າທີ່ເປັນພະນັກງານຢູ່ກອງກໍ່ສ້າງທາງເລກ 6, ເສັ້ນທາງແຕ່ຊຳເໜືອ ( ທາງລ້ອງ ) ເຖິງສາຍແດນຫວຽດນາມ ( ບ້ານດ່ານ - ຊຽງເຂືອງ ). ໃນຕອນບ່າຍຂອງມື້ໜຶ່ງ ລະຫວ່າງທ້າຍປີ 1972 ຕົນເອງພ້ອມກັບອ້າຍພົມມາ ຜູ້ເປັນຫົວໜ້າກອງບັນຊາການກອງກໍ່ສ້າງນັ້ນ ກຳລັງຍ່າງກວດກາເສັ້ນທາງຢູ່ລຽບແຄມນ້ຳຫ້ວຍນ້ອຍ ທີ່ມີຊື່ວ່າ " ນ້ຳປົວ ". ອ້າຍພົມມາ ພ້ອມດ້ວຍພະນັກງານວິຊາການຍ່າງໄປກ່ອນຢ່າງຊ້າໆ. ຕົນເອງນີ້ແມ່ນຍ່າງຕາມຫຼັງຢູ່ຫ່າງໆ ເພາະນອກຈາກເບິ່ງທາງແລ້ວຍັງຍາດເວລາແນມຜ່ານກໍໄຜ່ນ້ອຍໆແຄມຫ້ວຍນັ້ນ ສັງເກດເບິ່ງນ້ຳທີ່ເກີດ

ຈາກຕົນພູຕົນຜາມາໂຮມເປັນນ້ຳຫ້ວຍຢູ່ເບື້ອງລຸ່ມ ແລະ ໄຫຼເຊາະຕຳຜ່ານບັນດາໂງ່ນຫີນໄປ ອັນເຮັດໃຫ້ມີສຽງຍືດເຍືອແບບຄ່ອຍໆທີ່ໜ້າອອນຊອນຫູຢູ່ນັ້ນ. ບໍ່ດົນກໍ່ມີລົດຈິບ " ກາຍຕຽນ " ສອງຄັນແລ່ນມາທາງໜ້າເບື້ອງມາແຕ່ເຂດນ້ຳມ້າພຸ້ນ. ພໍມາເຖິງເຊິ່ງກັບອ້າຍພິມມາລົດສອງຄັນດັ່ງກ່າວກໍ່ແລ່ນຊ້າໆລົງ ແລ້ວມາຢຸດຢູ່ພຽງຂ້າພະເຈົ້າພີ້. ບໍ່ພໍຄາວແວ່ນປະຕູຫຼັງລົດຄັນທີໜຶ່ງກໍ່ຖືກບິດລົງພ້ອມມີສຽງເອີ້ນຂຶ້ນວ່າ: **"ຈັ່ງໃດເຮີຍພິມມາ!"**. ທັນທີອ້າຍພິມມາ ກໍ່ຟ້າວຍ່າງແບບໂຢບກວ້າງໆກັບຫຼັງມາຢ່າງໄວວາ. ພໍມາເຖິງປະຕູລົດກໍ່ປິດໝວກ ແລະ ເວົ້າອອກດ້ວຍສຽງຕື່ນໆວ່າ **" ໂທ ! ແມ່ນເພິ່ນເດນີ້ ! ນຶກວ່າແມ່ນໃຜຊັ້ນດອກ ! ສະບາຍດີອ້າຍ ! ເພິ່ນມາແຕ່ໃສນໍນີ້ ! "** ໃນທຳນອງນີ້ລະຈື່ບໍ່ໄດ້ຄັກແທ້ຍ້ອນຕົນເອງນີ້ກຳລັງຕົກສະເງີ້ຕື່ນເຕັ້ນໃນໃຈຢູ່ເພາະຜູ້ທີ່ຢູ່ໃນລົດ ເປີດປະຕູອ່ວາຍໜ້າມາໂອ້ລົມກັບອ້າຍພິມມາຢູ່ນັ້ນແມ່ນລູງໄກສອນ ພົມວິຫານ ນັ້ນເອງ !.

ມາເຖິງນີ້ ຂ້າພະເຈົ້າສຳນຶກເຫັນເພິ່ນແຕ່ໃນທ່າທາງແບບທາງການອັນເຄັ່ງຂຶມເປັນທ່າງໆຂອງບູລຸດຜູ້ນຳຂັ້ນສູງເທົ່ານັ້ນ. ບາດມາພົບເຫັນເພິ່ນໃນຕົວຈິງແລ້ວ ຕົນເອງຮູ້ສຶກຈັບໃຈໃນວາດຊົງສຽງເວົ້າອັນທຳມະດາທຳມະດາຂອງເພິ່ນ ເວລາເພິ່ນຊັກຖາມໂອ້ລົມກັບອ້າຍພິມມານັ້ນ. ເບິ່ງແລ້ວຄືພວກເພິ່ນຄົງຈະຮູ້ຈັກຊິນເຄີຍກັນມານານແລ້ວ ເພາະອ້າຍພິມມາກໍ່ແມ່ນພະນັກງານປະຕິວັດຫຼັກແຫຼ່ງພື້ນຖານເກົ່າທີ່ສຳຄັນຜູ້ໜຶ່ງ, ຊຶ່ງເມື່ອກ່ອນກໍ່ໄດ້ຮັບໜ້າທີ່ ເປັນເຈົ້າເມືອງ ເມືອງເປີນມາແລ້ວ. ອັນທີ່ແປກຕື່ມແມ່ນເພິ່ນທັງເວົ້າທັງລົມກັບອ້າຍພິມມາແຕ່ເຫຼືອດຕາມາເບື້ອງຂ້າພະເຈົ້າຢູ່ເລື້ອຍ. ອັນນີ້ຄືຈະແມ່ນສິ່ງທີ່ເຮັດໃຫ້ອ້າຍພິມມາ ງວາກໜ້າພ້ອມຊີ້ມືມາທາງຕົນພີ້ ແລະ ເວົ້າວ່າ: **" ແມ່ນສະຫາຍພູນ ທີ່ມາແຕ່ເມືອງຝຣັ່ງ ! ເປັນຫົວໜ້າກອງກິນຈັກຢູ່ນີ້ ! "**. ທັນທີລູງໃຫຍ່ກໍ່ລັ່ນປາກອອກວ່າ **" ເອີ ! ແມ່ນ**

**ທອງພູນ ບໍນີ້ ! ".** ອັນເປັນຄຳເວົ້າຄັ້ງທຳອິດ ຂອງລູງໄກສອນ ພ້ອມໃບໜ້າອັນຍິ້ມແຍ້ມຕໍ່ຂ້າພະເຈົ້າ ຊຶ່ງຂ້າພະເຈົ້າຄືຈະບໍ່ມີວັນລືມ ໂດຍສະເພາະການຕ້ອຍຕື່ມຊື່ໃຫ້ຈາກ " ພູນ " ເປັນ " ທອງພູນ " ນັ້ນ. ທັນໃດຕົນເອງກໍ່ຕອບເພິ່ນໄປດ້ວຍຄວາມດີໃຈວ່າ **" ຈ້າວ ! ແມ່ນແລ້ວລູງ ! "** ພ້ອມທັງກົ້ມຫົວຍົກມືນົບເພິ່ນໂດຍທີ່ໝວກປົດອອກກ່ອນແລ້ວນັ້ນຄາມືເບື້ອງໜຶ່ງຢູ່. ເວົ້າຕາມຄວາມຈິງແລ້ວຢູ່ເຂດປົດປ່ອຍເກົ່າ ແຕ່ກ່ອນການຍໍມືນົບໄຫວ້ນີ້ບໍ່ໄດ້ຖືກນຳໃຊ້ແລ້ວແຕ່ຄວາມຮູ້ສຶກປະທັບໃຈອັນຊາບຊຶ້ງ ໄດ້ພາໃຫ້ຕົນເອງນີ້ອິດປະພຶດຕາມບໍ່ໄດ້. ພາຍຫຼັງງຶກຫົວຍິ້ມ ແລະ ສັງເກດເບິ່ງຂ້າພະເຈົ້າຢູ່ຄາວໜຶ່ງເພິ່ນກໍ່ຖາມເຖິງສະພາບຄອບຄົວລູກເຕົ້າຊຶ່ງຕົນເອງກໍ່ໄດ້ຕອບໃຫ້ເພິ່ນຮູ້ວ່າ ເມັຍພ້ອມລູກທັງສອງຄົນນັ້ນຢູ່ທີ່ ໂຮງຮຽນຄົມມະນາຄົມເມືອງກ່າງພຸ້ນ, ແຕ່ລະເດືອນຕົນນີ້ໄປຢາມເທື່ອໜຶ່ງ ພໍໄດ້ຊ່ວຍບາງວຽກໜັກຕັກນ້ຳຂຶ້ນຈາກຫ້ວຍຢູ່ຕີນພູ ຫຼື ຊອກຫາຫຼົວຫາຟືນໄວ້ໃຫ້. ສັງເກດວ່າລູງໃຫຍ່ເຮັດຄິ້ວສິນເຂົ້າພ້ອມເວົ້າວ່າ: **" ໂຫ ! ເປັນເດືອນພຸ້ນຫວາຈຶ່ງໄດ້ໄປຫາກັນ ! "** ຂ້າພະເຈົ້າຈຶ່ງໄດ້ຕອບເພິ່ນຕາມຄວາມເປັນຈິງວ່າ: **" ຕາມແຜນແມ່ນແນວນັ້ນແລ້ວລູງ ! ແຕ່ວ່າຍາມໃດມີວຽກລົດໄປທາງນັ້ນບາງເທື່ອ ກໍ່ໄດ້ຍາດເວລາໄປແວ່ຢາມຢູ່ ແຕ່ບໍ່ໄດ້ຄ້າງຄືນ ! ".** ພໍດີອ້າຍພົມມາເລີຍຈັບໂອກາດແຈ້ງໃຫ້ລູງໄກສອນ ຮູ້ວ່າຍ້ອນເຫັນໃຈ ແລະ ເພື່ອຊ່ວຍແກ້ໄຂຄວາມຫຍຸ້ງຍາກໃນສະພາບຢູ່ແຍກກັນຄົນລະບ່ອນກັບຄອບຄົວນີ້ທາງກອງບັນຊາການກອງກໍ່ສ້າງກໍ່ໄດ້ສະເໜີເຖິງພະແນກໂຍທາສູນກາງແລ້ວວ່າ ຂໍໃຫ້ຍ້າຍຄອບຄົວຂອງຂ້າພະເຈົ້າພ້ອມລູກນ້ອຍສອງຄົນຈາກໂຮງຮຽນເມືອງກ່າງມາຢູ່ນຳ ແລະ ຮັບໜ້າທີ່ວຽກງານຢູ່ສຳນັກກອງກໍ່ສ້າງທີ່ນ້ຳປານພີ້, ແຕ່ຍັງບໍ່ມີຄຳຕົກລົງເຫັນດີມາເທື່ອ. ເມື່ອຮັບຊາບລູງໃຫຍ່ກໍ່ງຶກຫົວ ແລະ ເວົ້າອອກມາວ່າ: **" ເອີ ! ຄືຈະບໍ່ດົນດອກ ! ".** ຈາກນັ້ນເພິ່ນກໍ່ແນະນຳຕື່ມວ່າ:

**" ດີແລ້ວທອງພູນເອີຍ ! ຕໍ່ໄປຈົ່ງພ້ອມກັນອົດທົນຜ່ານຜ່າແທ້ໆເດີ ! ຈົ່ງຢ່າໄດ້ທໍ້ຖອຍ ! "** ແລ້ວເພິ່ນກໍ່ບອກໃຫ້ຂັບລົດເດີນທາງຕໍ່ໄປໄດ້. ທຸກຄົນກໍ່ພ້ອມກັນຢືນແນມນຳຢ່າງຈົດຈໍ່ຈົນລົດ " ກາຍຕຽນ " ສອງຄັນນັ້ນລ້ຽວຫາຍໄປໃນຮ່ອມພູ.

ຫຼັງຈາກນັ້ນ ອ້າຍພິມມາກໍ່ຍ່າງມາຄຽງຂ້າງຂ້າພະເຈົ້າ ແລະ ເວົ້າຊຸບໃສ່ຫູວ່າ: **" ເຫັນບໍ່ ! ເພິ່ນນີ້ແມ່ນເປັນຄົນແນວນັ້ນແທ້ໃດ ! ປາກເວົ້າໂອ້ລົມໃນທັດສະນະເປັນກັນເອງທີ່ສຸດ ! ນິໄສໃຈຄໍທຳມະດາ ທຳມະດາ ! ".** ສ່ວນຕົນເອງນີ້ສຸດທີ່ເຫັນດີເຫັນພ້ອມນຳອ້າຍພິມມາ ໂດຍງຶກຫົວຮັບຟັງແຕ່ບໍ່ໄດ້ເວົ້າຫຍັງອອກ ຍ້ອນວ່າຍັງຊຶ່ງເຊີ້ປະທັບໃຈໃນທ່າທາງ ແລະ ຄຳເວົ້າອັນຈັບໃຈຂອງຜູ້ທີ່ແມ່ນຜູ້ນຳສູງສຸດຂອງການປະຕິວັດຕໍ່ຕົນເອງ ແລະ ຄອບຄົວນັ້ນຢູ່.

## ລູງໄກສອນ ຄົງຈະມີສ່ວນເຮັດໃຫ້ຄອບຄົວຂອງຂ້າພະເຈົ້າ ພ້ອມລູກສອງຄົນຖືກຍົກຍ້າຍມາຢູ່ຮ່ວມກັນ ຢູ່ກອງກໍ່ສ້າງທາງເລກ 6.

ຫຼັງຈາກໄດ້ພົບລູງໃຫຍ່ໃນມື້ນັ້ນແລ້ວ ຂ້າພະເຈົ້າໄດ້ມີຄວາມຮູ້ສຶກວ່າເພິ່ນກຳສະພາບຂອງຕົນ ແລະ ຄອບຄົວໄດ້ສ່ວນໃດສ່ວນໜຶ່ງ. ເມື່ອຄິດເບິ່ງແລ້ວກໍ່ເຫັນວ່າບໍ່ແປກຫຍັງ ເພາະບັນດາຜູ້ນຳການປະຕິວັດຈະຕ້ອງໄດ້ຮັບລາຍງານທຸກເທື່ອທີ່ມີນັກສຶກສາທີ່ຝ່າຍວຽງຈັນສົ່ງໄປຮຽນຢູ່ປະເທດຕາເວັນຕົກນັ້ນໂຕນມາຮ່ວມການຕໍ່ສູ້ຢູ່ເຂດປົດປ່ອຍພາຍຫຼັງຮຽນສຳເລັດແລ້ວ. ຊຶ່ງອັນນີ້ນານໆກໍ່ມີເທື່ອໜຶ່ງໃນແຕ່ລະປີຜ່ານມາ. ໃນກໍລະນີຂອງຕົນທີ່ໂຕນມາແຕ່ຝຣັ່ງເສດໃນປີ 1971 ນັ້ນພັດແມ່ນມາພ້ອມກັບເມັຍ ແລະ ລູກນ້ອຍສອງຄົນອີກ. ແນ່ນອນວ່າພວກເພິ່ນຈະຕ້ອງໄດ້ຮັບລາຍງານ ແລະ ເວົ້າລົມກັນເຖິງສະພາບຂອງຂ້າພະເຈົ້າ ແລະ ລູກເມັຍ. ອີກຢ່າງໜຶ່ງໃນໄລຍະພັກເຊົາ 2-3 ເດືອນຢູ່ຖ້ຳຮັບແຂກທີ່ນາໄກ່ ຊຶ່ງດຽວນີ້ແມ່ນເມືອງວຽງໄຊເພື່ອລໍຖ້າການສັບຊ້ອນໜ້າທີ່ນັ້ນ, ນອກຈາກການຮັບຕ້ອນພົບປະໄປມາຫາສູ່ກັບບັນດາຜູ້ທີ່ຮູ້ຈັກຮັກແພງໂດຍສະເພາະບັນດາສະຫາຍລຸ້ນອ້າຍທີ່ໄດ້ໂຕນມາຮ່ວມການຕໍ່ສູ້ກ່ອນນັ້ນແລ້ວ ສິ່ງທີ່ຕົນ ແລະ ຄອບຄົວໄດ້ມີຄວາມພູມໃຈທີ່ສຸດກໍ່ແມ່ນການໄດ້ຮັບຄວາມເອົາໃຈໃສ່ໃຫ້ຄວາມອົບອຸ່ນຈາກຄອບຄົວຂອງການນຳເປັນຢ່າງດີ. ຂ້າພະເຈົ້າຍັງຈື່ມື້ທີ່ປ້າບຸນມາ ພູມສະຫວັນຕ້ອນຮັບພວກຕົນພ້ອມລູກນ້ອຍໄປຮ່ວມພາເຂົ້າທ່ຽງຢູ່ຖ້ຳ ທີ່ພັກຂອງເພິ່ນບ່ອນທີ່ໄດ້ໃຫ້ໂອກາດແກ່ຕົນເອງນີ້ ໄດ້ເຂົ້າຂໍ່ານັບລູງໜູຮັກ ພູມສະຫວັນ ແລະ ຕອບຂໍ້ຊັກຖາມຕ່າງໆຂອງເພິ່ນ. ຕໍ່ມາກໍ່ແມ່ນປ້າຄຳສຸກ ວົງວິຈິດ ທີ່ໄດ້ເຊີນພວກຕົນ ແລະ ລູກໄປກິນເຂົ້າຍາມຢູ່ຖ້ຳຂອງເພິ່ນຢູ່ບ່ອນໜຶ່ງອີກ, ແຕ່ບໍ່

ໄດ້ພົບລູງພູມີ ເພາະເວລານັ້ນເພິ່ນບໍ່ຢູ່. ມື້ໜຶ່ງກໍ່ແມ່ນລູງພູນ ສີປະເສີດ ເອງ ທີ່ຜ່ານກາຍມາທາງຖ້ຳຮັບແຂກ ແລ້ວກໍ່ມາແວ່ຢຸດຖາມຂ່າວຂ້າພະເຈົ້າທີ່ກຳລັງຢູ່ໃນສວນຜັກແຄມຕີນຖ້ຳນັ້ນ. ສິ່ງເລົ່ານີ້ໄດ້ເຮັດໃຫ້ຂ້າພະເຈົ້າເຊື່ອໝັ້ນວ່າສະພາບຂອງຕົນ ແລະ ຄອບຄົວຖືກຕິດຕາມຢູ່ ແລະ ແນວໃດຂັ້ນເທິງກໍ່ຈະໄດ້ແກ້ໄຂໃຫ້ມາຢູ່ຮ່ວມກັນ ຕາມໄດ້ສະເໜີຂຶ້ນໄປນັ້ນ. ຊຳບໍ່ພໍບັນຫາພັດໄດ້ເຂົ້າຫູລູງໄກສອນເອງຕື່ມອີກ !.

ຫຼັງຈາກມື້ນັ້ນມາປະມານບໍ່ເທົ່າໃດວັນ ອ້າຍພົມມາ ຫົວໜ້າກອງບັນຊາການກອງກໍ່ສ້າງ ກໍ່ແຈ້ງໃຫ້ຕົນຊາບວ່າ ຂັ້ນເທິງໄດ້ເຫັນດີໃຫ້ຄອບຄົວ ແລະ ລູກຍົກຍ້າຍຈາກໂຮງຮຽນເມືອງກ່າງມາສັງກັດຢູ່ນຳກັນທີ່ກອງກໍ່ສ້າງທາງເລກ 6 ພີ້. ນອກນັ້ນແລ້ວຄະນະກອງບັນຊາການກອງກໍ່ສ້າງ ກໍ່ໄດ້ຕົກລົງຈະໃຫ້ນາງ ຄອນສະຫວັນ ພັນລະຍາຂອງຂ້າພະເຈົ້າມາເຮັດໜ້າທີ່ວຽກງານບັນຊີຊ່ວຍຫົວໜ້າຄຸ້ມຄອງການເງິນ ແລະ ການເບີກຈ່າຍແກ່ບັນດາຊາວກຳມະກອນເຮັດທາງ ຊຶ່ງສ່ວນໃຫຍ່ແລ້ວແມ່ນພວກສະເລີຍເສິກເກົ່າຈາກບັ້ນລົບນ້ຳບາກ ທີ່ຖືກຈັດຕັ້ງເປັນຫຼາຍກອງຮ້ອຍກໍ່ສ້າງທາງຢາຍຢູ່ເປັນຈຸດຫ່າງກັນໄປຕາມເສັ້ນທາງເລກ 6 ນັ້ນ. ເມື່ອໄດ້ຮັບຊາບແລ້ວຂ້າພະເຈົ້າສຸດທີ່ຮູ້ສຶກພໍໃຈ ແລະ ດີໃຈ. ອັນນີ້ຍ້ອນວ່າຕົນເອງມີຄວາມເປັນຫ່ວງຢູ່ບໍ່ແລ້ວນຳລູກນຳເມັຍທີ່ຢູ່ອີກບ່ອນໜຶ່ງນັ້ນ. ຊີວິດຢູ່ເຂດປົດປ່ອຍບໍ່ແມ່ນເລື່ອງຈະງ່າຍເລີຍ ໃນເບື້ອງຕົ້ນສຳລັບຜູ້ທີ່ໂຕນມາໃໝ່ ທີ່ຕ້ອງໄດ້ຢູ່ຕາມແຄມຕີນພູຕີນຜາໃກ້ກັບຮູຖ້ຳ ເພື່ອຈະເຂົ້າຫລົບຫລີກໄດ້ໄວເວລາຍິນສຽງຍົນອາເມລິກາບິນກາຍໄປມາຫາຖິ້ມລະເບີດທຳລາຍນັ້ນ. ນອກນັ້ນແລ້ວບັນຫາຕັກນ້ຳຂຶ້ນຈາກຫ້ວຍຮ່ອງມາໄວ້ໃຊ້ ຫຼື ຫາຫຼົວຫາຟືນເພື່ອການແຕ່ງຢູ່ຄືວກິນປະຈຳວັນ ແລະ ອື່ນໆກໍ່ແມ່ນເລື່ອງທີ່ຕ້ອງໄດ້ອົດທົນຫາບແບກເປັນປະຈຳວັນໄປ. ໃນສະພາບທີ່ມີລູກນ້ອຍສອງຄົນ, ຜູ້ກົກ 2 ປີເຄິ່ງ,

ຜູ້ທີສອງປະມານ 8-9 ເດືອນ ຕິດຕາມມານຳແລ້ວຍິ່ງບໍ່ແມ່ນຈະງ່າຍຈັກດີ້ ! ຊ້ຳບໍ່ໜຳພັດໄດ້ແຍກກັນຢູ່ຄົນລະບ່ອນ ໄກກັນບໍ່ໜ້ອຍ, ຜົວຢູ່ບ່ອນໜຶ່ງ ເມັຍ ແລະ ລູກນ້ອຍສອງຄົນຢູ່ອີກບ່ອນໜຶ່ງ ແລ້ວດົນໆຜົວຈຶ່ງໄດ້ມາຫາພໍ ຊ່ວຍມືຊ່ວຍຕີນ.

ໃນຕົວຈິງເມື່ອໄດ້ມາຢູ່ຮ່ວມກັນແລ້ວ ບັນຫາຫຍຸ້ງຍາກຕ່າງໆກໍ່ໄດ້ ຫຼຸເລົາລົງ ທຸກສິ່ງທຸກຢ່າງໄດ້ເລີ່ມສະດວກສະບາຍຂຶ້ນ. ນອກຈາກສະດວກ ສະບາຍໃນການຢູ່ກິນຮ່ວມຮຽງຄຽງຂ້າງສະໝານສາມັກຄີກັບບັນດາຄອບ ຄົວພະນັກງານ ແລະ ກຳມະກອນໃນກອງກໍ່ສ້າງແລ້ວຕໍ່ມາຕົນເອງ ແລະ ຄອບຄົວຍັງໄດ້ມີການພົວພັນອັນດີໄປມາຫາສູ່ສ້າງຮັກສ້າງແພງອັນຈົບງາມ ກັບພໍ່ແມ່ປະຊາຊົນ ສອງ - ສາມ ບ້ານທີ່ຕັ້ງຢູ່ໃກ້ຄຽງກັບສຳນັກກອງກໍ່ສ້າງ ທາງເລກ 6 ໃນເຂດນ້ຳປານຄຶບກັບນ້ຳປົວນັ້ນອີກ. ເວົ້າໄດ້ວ່າທັງສອງຜົວ ເມັຍພວກຕົນນີ້ໄດ້ປັບຕົວເປັນກ້າວໆເຂົ້າກັບສະພາບໄດ້ຢ່າງດີ ແລະ ດຳ ລົງຊີວິດຮ່ວມການຕໍ່ສູ້ໄປຢ່າງມ່ວນຊື່ນເບີກບານ ແລະ ຫ້າວຫັນຕໍ່ໜ້າທີ່ ວຽກງານຢ່າງຄຽງບ່າຄຽງໄລ່ກັບມວນຊົນປະຕິວັດທົ່ວໄປ.

**ບໍ່ຮູ້ວ່າລຸງໃຫຍ່ ໄກສອນ ພົມວິຫານ ໄດ້ລົງເລິກມີສ່ວນຊຸກຍູ້ໃຫ້ ຄອບຄົວພວກເຮົາໄດ້ມາຢູ່ຮ່ວມກັນໂດຍໄວນັ້ນຫຼືບໍ່ ຫຼື ວ່າແນວໃດການຈັດ ຕັ້ງຂັ້ນກ່ຽວຂ້ອງກໍ່ໄດ້ກຽມແກ້ໄຂໃນທຳນອງນີ້ຢູ່ແລ້ວ. ແຕ່ເຖິງຢ່າງໃດຂ້າ ພະເຈົ້າກໍ່ໄດ້ມີຄວາມປະທັບໃຈ ແລະ ຮູ້ສຶກວ່າເປັນບຸນຄຸນອັນລົ້ນເຫຼືອທີ່ຕົນ ແລະ ອ້າຍພົມມາໄດ້ພົບພໍ້ເພິ່ນໂດຍບັງເອີນໃນວັນກ່ອນນັ້ນ.**

## ຈອກເຫລົ້າພ້ອມຄຳອວຍພອນຂອງ ລຸງໄກສອນ ທີ່ຂ້າພະເຈົ້າຈະບໍ່ມີວັນລືມໄດ້.

ສຳນັກກອງບັນຊາການກອງກໍ່ສ້າງທາງເລກ 6 ແມ່ນບໍ່ໄກຈາກເຂດ " ທາງລ້ອງ " ແລະ ເຂດສູນກາງເມືອງວຽງໄຊເທົ່າໃດ. ສະຖານທີ່ແມ່ນຕັ້ງຢູ່ສືບປານຂ້າງບ້ານນາລຸ້ງບ່ອນນ້ຳຫ້ວຍນ້ອຍຊື່ວ່າ " ນ້ຳປານ " ໄຫຼລົງມາຄົບກັບ " ນ້ຳປົວ " ນັ້ນ. ພ້ອມກັນກໍ່ແມ່ນຢູ່ແຄມທາງຜ່ານໄປມາລະຫວ່າງເມືອງຊຳເໜືອ, ນາໄກ່ ຫຼື ເມືອງວຽງໄຊ ຫາ ເຂດນ້ຳມ້າເຖິງສາຍແດນຫວຽດນາມເບື້ອງສົບເບົາ ຫຼື ເບື້ອງບ້ານດ່ານ - ຊຽງເຂືອງ. ດັ່ງນັ້ນ, ຈຶ່ງໄດ້ມີຜູ້ນຳທີ່ຜ່ານກາຍໄປມາແວ່ເຂົ້າມາຢາມຢູ່ເລື້ອຍ. ໃນລະຫວ່າງທ້າຍປີ 1973 ໃນຕອນບ່າຍມື້ໜຶ່ງກໍ່ແມ່ນລຸງໄກສອນ ພົມວິຫານ ທີ່ລົງແວ່ຢ້ຽມຢາມ. ທັນໃດຢູ່ທີ່ສະໂມສອນກອງກໍ່ສ້າງກໍ່ໄດ້ມີການພົບປະໂອ້ລົມລະຫວ່າງເພິ່ນ ແລະ ຄະນະກອງບັນຊາການກອງກໍ່ສ້າງ. ໃນການພົບປະນີ້ຂ້າພະເຈົ້າບໍ່ໄດ້ເຂົ້າຮ່ວມເພາະບໍ່ຢູ່ໃນຄະນະກອງບັນຊາການເທື່ອ ແຕ່ວ່າໄດ້ຕິດຕາມລໍຄອຍຢູ່ທາງນອກແບບຫ່າງໆ. ເມື່ອເສັດຊິ້ນການພົບປະແລ້ວ ລຸງໄກສອນຕິດຕາມໂດຍໜ່ວຍປ້ອງກັນ ແລະ ມີອ້າຍພົມມາ ຫິວໜ້າກອງບັນຊາການກອງກໍ່ສ້າງຫຍ່ມຂ້າງຢູ່ ກໍ່ເລີ້ມຍ່າງເລາະຊ້າໆຜ່ານເຮືອນພັກຂອງຄອບຄົວພະນັກງານ ຊຶ່ງເວົ້າແທ້ແມ່ນເຮືອນຕູບເຮັດດ້ວຍໄມ້ໄຜ່ ແລະ ມຸງຫຍ້າຕັ້ງລຽນກັນຈາກສົ້ນສະໂມສອນໂຄ້ງອ້ອມເດີນລົງມາເບື້ອງແຄມນ້ຳປານ ຊຶ່ງຫຼັງສຸດທ້າຍແມ່ນບ້ານພັກຂອງຂ້າພະເຈົ້າ ແລະ ຄອບຄົວ. ຄິດວ່າພວກເພິ່ນຈະເລາະເບິ່ງຈັກຄາວແລ້ວກໍ່ຄົງຈະກັບເຂົ້າສະໂມສອນຄືນ. ແຕ່ບໍ່ເປັນແນວນັ້ນ. ລຸງໄກສອນພ້ອມໜ່ວຍປ້ອງກັນແມ່ນສືບຕໍ່ຍ່າງລົງມາຕໍ່ຈົນເຖິງເຂດໜ້າເຮືອນພັກພວກຂ້າພະເຈົ້ານີ້ ໂດຍທີ່ອ້າຍພົມມາ ບໍ່ໄດ້ລົງມານຳແຕ່ຢຸດຢືນຫ່າງໆຢູ່ເບື້ອງ

ຫຼັງລັກສະນະລໍຖ້ານີ້ລະ. ແນ່ນອນວ່າເພິ່ນຄົງໄດ້ຮັບລາຍງານເຖິງສະພາບຂອງຕົນພ້ອມຄອບຄົວ ແລະ ຮູ້ວ່າຢູ່ເຮືອນຫຼັງໃດ. ສ່ວນຕົນເອງນີ້ຊຶ່ງໄດ້ຕິດຕາມສະພາບມາຢູ່ນັ້ນແມ່ນຮູ້ສຶກຕື່ນເຕັ້ນໃນໃຈທີ່ສຸດ ຈົນບໍ່ຮູ້ຈະເວົ້າຫຍັງນອກຈາກເອີ້ນໃຫ້ຄອບຄົວອອກມາຢືນຮຽງກັນລໍຖ້າຢູ່ລະບຽງນ້ອຍເບື້ອງໜ້າເຮືອນນັ້ນ. ພໍເພິ່ນມາເຖິງພວກເຮົາທັງສອງກໍ່ກົ້ມຫົວຖາມສະບາຍດີເພິ່ນ. ພໍເຫັນພວກເຮົາລູງໄກສອນກໍ່ຢຸດຢືນຢູ່ຕໍ່ໜ້າເຮືອນ ແລະ ເວົ້າວ່າ: **" ໂອຫອງພູນ ພວກເຈົ້າຢູ່ນີ້ນໍ ! ເປັນແນວໃດສະບາຍດີຢູ່ບໍ່ ? "** ຂ້າພະເຈົ້າຕອບເພິ່ນໄປວ່າ: **" ທຸກຄົນສະບາຍດີລູງ ! ສຸຂະພາບແຂງແຮງ ນອກຈາກວ່າເຂົ້າໜາວມາແລ້ວມັກເປັນຫວັດເປັນໄອນີ້ແລ້ວ ! "**. ເພິ່ນສັງເກດເບິ່ງພວກເຮົາຄາວໜຶ່ງແລ້ວກໍ່ເວົ້າວ່າ: **" ດີ ! ດີ ! "** ພ້ອມທັງກ້າວເຂົ້າມາສູ່ລະບຽງທີ່ສູງລື່ນພື້ນພຽງເລັກນ້ອຍນັ້ນແລ້ວຖາມຕື່ມອີກວ່າ: **"ເດັກນ້ອຍເດເປັນແນວໃດ ? "** ທັນທີຄອນສະຫວັນພັນລະຍາຂ້າພະເຈົ້າກໍ່ຕອບເພິ່ນວ່າ: **" ເດັກນ້ອຍທັງສອງຢູ່ດີມີແຮງຢູ່ພຽງແຕ່ດື້ຫຼາຍເທົ່ານັ້ນລູງເອີຍ ! "** ພ້ອມທັງຊີ້ມືໃສ່ລູກສາວກົກນາງ ດາລາພອນ ຊຶ່ງຍາມນັ້ນອາຍຸເຂົ້າ 4 ປີກ່ວາແລ້ວ ທີ່ຢືນແປະແມ່ເບິ່ງເພິ່ນຢູ່ຢ່າງບໍ່ປາກ ແລະ ລູກຊາຍທ້າວ ທະນູໄຊ ອາຍຸ 2 ປີກ່ວາທີ່ກໍາລັງຫຼິ້ນຄົນດຽວເສີຍຢູ່ເດີ່ນນ້ອຍໆຂ້າງລະບຽງເຮືອນນັ້ນ. ລູງໄກສອນຟັງແລ້ວກໍ່ຫົວຄ່ອຍໆຢ່າງດີໃຈນໍາ. ຈາກນັ້ນເພິ່ນກໍ່ອ່ວາຍໜ້າອອກໄປແນມເບິ່ງເຂດບໍລິເວນອ້ອມເຮືອນ ແລ້ວກໍ່ຈົ້ງໜ້າສັງເກດເບິ່ງສວນຕໍ່ໜ້າເຮືອນພາກທາງລົງໄປນ້ໍາປານອີກເບື້ອງໜຶ່ງນັ້ນ ຊຶ່ງແມ່ນສວນຄອບຄົວຂອງພວກຂ້າພະເຈົ້າ. ເວົ້າແທ້ສວນນັ້ນບໍ່ໄດ້ກວ້າງເທົ່າໃດແຕ່ເປັນຕາເບິ່ງເພາະລັກສະນະຕ່າງໆໝູ່ໃນແຄບນັ້ນ ຍ້ອນຜູ້ເປັນພັນລະຍາແມ່ນຜູ້ໜຶ່ງທີ່ມັກການປູກຝັງ ແລະ ກໍ່ໄດ້ ປູກຫຼາຍແນວໄວ້ຢ່າງເປັນຖັນເປັນແຖວດີ. ນອກຈາກກ້ວຍແລ້ວກໍ່ມີອ້ອຍ ແລະ ສາລີທີ່ກໍາລັງເປັນໝາກ ພ້ອມທັງມີຫັບຮັງເຜິ້ງລ້ຽງອີກ

ທີ່ມັດຕິດໄວ້ງ່າມງ່າໄມ້ປ່າກົກໜຶ່ງຊຶ່ງຕັ້ງຢູ່ກາງສວນນັ້ນ. ໃນສວນເບິ່ງແລ້ວບໍ່ມີຜັກຈັກຊະໜິດເພາະຢູ່ເທິງຕະລິ່ງນ້ຳປານບ່ອນສູງໂພດ. ສ່ວນວ່າຜັກກະລ່ຳປີ, ຜັກກາດ, ຜັກສະຫຼັດ ພ້ອມຜັກບົ່ວ, ຜັກທຽມນັ້ນ ພວກເຮົາປູກຢູ່ສວນນ້ອຍຢູ່ລຸ່ມແຄມນ້ຳພຸ້ນ. ຄາວໜຶ່ງເພິ່ນກໍ່ຖາມຂຶ້ນ " **ສວນນີ້ແມ່ນສວນໃຜ ? ຄືຈະແມ່ນສວນ ຄອບຄົວພວກເຈົ້ານໍ !** ". ທັນທີນາງ ຄອນສະຫວັນ ຜູ້ເປັນເມັຍຊຶ່ງແມ່ນເຈົ້າຂອງທີ່ແທ້ຂອງສວນນັ້ນກໍ່ຕອບເພິ່ນຢ່າງພູມໃຈວ່າ: " **ຈ້າວແມ່ນແລ້ວລູງ ! ສ່ວນວ່າສວນຜັກນັ້ນແມ່ນຢູ່ເບື້ອງລຸ່ມແຄມນ້ຳພຸ້ນ !** " ທາງລູງເພິ່ນ ເມື່ອໄດ້ຟັງກໍ່ງຶກຫົວດີໃຈນຳພ້ອມເວົ້າອອກວ່າ: " **ເອີ, ດີຫຼາຍ ! ດີຫຼາຍ !**"... ຄາວໜຶ່ງເພິ່ນກໍ່ງວາກມາແນມເບິ່ງໜ້າຂ້າພະເຈົ້າແລ້ວຖາມຂຶ້ນຢ່າງກົງໄປກົງມາວ່າ: " **ເອີນີ້ທອງພູນ ເຮົາຮູ້ຂ່າວວ່າສະຫາຍມັກກິນເຫຼົ້າ ແລະ ກິນຫຼາຍສົມຄວນອີກແມ່ນແທ້ຊັ້ນບໍ ?** ". ຂ້າພະເຈົ້າຕື່ນຕົກສະເງີ້ທັນທີ ແລະ ບໍ່ຮູ້ຈັກຈະຕອບເພິ່ນແນວໃດພຽງແຕ່ກົ້ມໜ້າຫົວຍຸ້ມນຳເພິ່ນເພາະເພິ່ນເອງຜູ້ຖາມກໍ່ມີໃບໜ້າຍິ້ມແຍ້ມ ແລະ ປ່ອຍສຽງຫົວ " **ຮື, ຮື** " ອອກມາ. ຜູ້ທີ່ລັ່ນປາກຕອບເພິ່ນຕາງຕົນເອງນີ້ແມ່ນນາງຄອນສະຫວັນ ຜູ້ເປັນເມັຍນັ້ນທີ່ສວຍໂອກາດບອກໄປວ່າ: " **ກາຍວ່າແມ່ນລູງເອີຍ ! ບາງເທື່ອກໍ່ຕັ້ງໂພດໄປອີຫຼີແທ້ !** ". ພໍແຕ່ໄດ້ຍິນລູງເພິ່ນກໍ່ຫົວຂຶ້ນຈົນພາໃຫ້ຕົນນີ້ ແລະ ໜ່ວຍປ້ອງກັນທີ່ຢືນຢູ່ແປະລະບຽງທາງນອກນັ້ນອິດຫົວນຳບໍ່ໄດ້. ທັນໃດເພິ່ນກໍ່ເວົ້າຢ້ຳຕື່ມວ່າ: " **ເຫັນບໍ່ຜູ້ຍິງເຂົາເຈົ້າເວົ້າ ! ຟັງເບິ່ງເດີແມ່ນຄວາມເຂົາເຈົ້າໃດ !** ". ຂ້າພະເຈົ້າກໍ່ເລີຍຕອບເພິ່ນວ່າ " **ແມ່ນຢູ່ລູງເອີຍຍາມມີໂອກາດຫຼານກໍ່ມັກກິນ ! ແລະ ຫຼານກໍ່ກິນໄດ້ແທ້ແຕ່ບໍ່ແມ່ນເລື້ອຍໆດອກ !** ". ເພິ່ນເລີຍຖາມຢ້ຳ ແລະ ເວົ້າຕື່ມວ່າ: " **ແມ່ນເຫຼົ້າຫຍັງກັນແທ້ ? ລະວັງໃດເຮົາໄດ້ຮູ້ວ່າຖ້າແມ່ນເຫຼົ້າເດັດອາດແມ່ນເຫຼົ້າມັນກໍເດີສ່ວນຫຼາຍ ແທນທີ່ຈະແມ່ນເຫຼົ້າເຂົ້າແທ້ !** ". ພໍດີຕົນເອງກໍ່ຈັບໂອກາດເລົ່າສະພາບສູ່ເພິ່ນຟັງ

ຢ່າງຫຍໍ້ໆວ່າແມ່ນຄວາມເພິ່ນເວົ້າແທ້, ທົ່ວໄປນັ້ນມີເຫຼົ້າມັນຕົ້ມ ມັນກໍປິ່ນເປຢູ່ນໍາ ແຕ່ສ່ວນທີ່ຕິນເອົາມານີ້ແມ່ນເຫຼົ້າເຂົ້າແທ້ ທີ່ຕາມສຽງຊາວເໜືອເອີ້ນວ່າເຫຼົ້າ " ນໍ້າເສີ " ແທນທີ່ຈະວ່ານໍ້າໃສນັ້ນ ຊຶ່ງແມ່ນເຫຼົ້າເຂົ້ານໍ້າກົກປຸກສົມຄວນ. ເມື່ອສັງເກດວ່າເພິ່ນຟັງຢູ່ຢ່າງສົນໃຈດ້ວຍໃບໜ້າອັນຍິ້ມແຍ້ມຕິນເອງກໍ່ເລີຍກ້າເລົ່າແບບວາດພາບຕື່ມ ຊຶ່ງກໍ່ແມ່ນຕາມຄວາມເປັນຈິງວ່າ: " **ບັນດາເຫຼົ້ານໍ້າເສີນີ້ ລູງເອີຍສ່ວນຫຼາຍຫຼານບໍ່ໄດ້ຊື້ເອົາມາດອກ ! ມັນແມ່ນຂອງຕ້ອນຈາກຊາວບ້ານຕ່າງໆ. ອັນນີ້ກໍ່ຍ້ອນວ່າຢູ່ເຂດປົດປ່ອຍບໍ່ມີລົດໂດຍສານ. ຢູ່ເຂດນໍ້າມ້ານີ້ ປະຊາຊົນໄປໄສກໍ່ແມ່ນອາໄສລັດລົດໄປໂດຍສະເພາະລົດຂົນສິ່ງຂອງກອງກໍ່ສ້າງທາງເລກ 6 ນີ້ ! ດັ່ງນັ້ນ, ບັນດາ "ໄຊເຟີ" ລົດຈຶ່ງໄດ້ຮັບຄວາມສະໜິດສະໜົມເປັນພິເສດຈາກປະຊາຊົນຊາວບ້ານຕ່າງໆ. ບັດນີ້ຫຼານເອງພັດແມ່ນຫົວໜ້າກອງລົດຜູ້ບັນຊາພວກໄຊເຟີລົດນັ້ນຊໍ້າ !**". ລູງໄກສອນ ຫົວ "**ເຮີເຮີ**" ຂຶ້ນ ແລະ ເອີ່ຍຢໍ້າວ່າ " **ສໍາພໍດອກ ! ສໍາພໍດອກ !** ". ອັນພາໃຫ້ຕິນເອງເລົ່າຕໍ່ໄປວ່າ: " **ຍາມຫຼານແວ່ໄປບ້ານໃດນີ້ມັກໄດ້ເຫຼົ້ານໍ້າເສີເປັນຂອງ ຕ້ອນໂລດ ! ບາງເທື່ອຮອດພາກັນໄຂເຫຼົ້າໄຫສູ່ກໍ່ມີ !** " ພໍດີເພິ່ນຖາມວ່າ " **ຢູ່ໄສເຫຼົ້ານໍ້າເສີເຈົ້ານັ້ນ ! ຖ້າຍັງມີເອົາມາເບິ່ງດູ !** ". ຂ້າພະເຈົ້າກໍ່ຟ້າວເຂົ້າໄປເອົາຢູ່ໃນຫ້ອງທາງຂ້າງອອກມາແກ້ວໜຶ່ງ ແລະ ຕັ້ງເທິງໂຕະນ້ອຍໃຫ້ເພິ່ນເບິ່ງອັນເປັນແກ້ວທີ່ມີນໍ້າເຫຼົ້າທີ່ໃສດີເຫຼືອຢູ່ກາຍເຄິ່ງແກ້ວ. ທັນທີເພິ່ນກໍ່ຖາມຫາຈອກຊຶ່ງນາງຄອນສະຫວັນກໍາລັງໄປລ້າງແລ້ວຈັບຈອກນ້ອຍຈອກໜຶ່ງ ອອກມາປົງເທິງໂຕະໃຫ້. ພໍດີລູງໃຫຍ່ກໍ່ບອກວ່າ: " **ເອົາບັດນີ້ທອງພູນ ລອງຫຍິ້ນເບິ່ງ ! ເຈົ້າກິນຊໍ່າໃດແຕ່ລະເທື່ອ ?** ". ຕິນເອງກໍ່ປະຕິບັດຕາມ ແລະ ຫຍິ້ນເຫຼົ້າລົງປະມານເຄິ່ງຈອກນ້ອຍນັ້ນ. ຄິດວ່າເພິ່ນຈະບອກໃຫ້ຕິນນີ້ກິນເບິ່ງແຕ່ກົງກັນຂ້າມເພິ່ນຈັບຈອກຂຶ້ນປົງໃສ່ຮີມສົບແລ້ວຊີມເບິ່ງເອງຈິບໜ້ອຍໜຶ່ງພ້ອມເວົ້າວ່າ: " **ເຫຼົ້ານີ້**

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນໍາ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ